# ສູນດູແລຂັ້ນຕົ້ນແບບບູລິມະສິດ

## ທ່ານຕ້ອງການພົບໝໍເປັນການດ່ວນບໍ?

ສູນດູແລຂັ້ນຕົ້ນແບບບູລິມະສິດ (PPCCs) ໃຫ້ການປິ່ນປົວຟຣີສຳລັບທຸກຄົນທີ່ໄດ້ຮັບບາດເຈັບຫຼືເຈັບປ່ວຍຢ່າງສຸກເສີນ.

ບັນດາທ່ານໝໍຂອງ PPCC ຈະຊ່ວຍທ່ານໃຫ້ໄດ້ຮັບການປິ່ນປົວທີ່ທ່ານຕ້ອງການ ໄດ້ໄວກວ່າພະແນກສຸກເສີນຂອງໂຮງໝໍ.

ເຂົາເຈົ້າສາມາດປິ່ນປົວພາວະທາງສຸຂະພາບຕ່າງໆເຊັ່ນການຊຶມເຊື້ອຂັ້ນເບົາບາງ, ຜິວໄໝ້ເລັກນ້ອຍ, ອາການເຄັດ ຫຼື ສົງໄສວ່າກະດູກຫັກ. ບໍລິການ PPCC ປະກອບມີ ພະຍາດວິທະຍາ, ລັງສີວິທະຍາ ແລະ ເພສັດຊະກຳ.

**ຖ້າທ່ານເກີດບາດເຈັບຫຼືເຈັບປ່ວຍຢ່າງຮ້າຍແຮງ, ໃຫ້ໂທຫາເລກສູນສາມໂຕ (000). ຖ້າທ່ານບໍ່ຕ້ອງການການດູແລທີ່ຮີບດ່ວນ, ໃຫ້ເຮັດນັດພົບກັບທ່ານໝໍປະຈຳຕົວຂອງທ່ານ.**

ບໍລິການ PPCC ແມ່ນຟຣີສຳລັບທຸກໆຄົນ, ເຖິງວ່າຈະມີບັດເມດີແຄຫຼືບໍ່ມີກໍຕາມ.

ມີນາຍພາສາໄວ້ໃຫ້ທີ່ PPCCs. ໂທຫາພະແນກບໍລິການແປເອກະສານແລະນາຍພາສາແຫ່ງຊາດ TIS ທີ່ເລກໂທ 131 450.

**ໃຫ້ເຂົ້າເບິ່ງຊ່ອງສຸຂະພາບທີ່ດີກວ່າ (Better Health Channel) ເພື່ອຫາສະຖານທີ່ແລະຂໍ້ມູນເພີ່ມເຕີມ:** betterhealth.vic.gov.au/priority-primary-care-centres

TIS Translating and Interpreting Service

phn Victorian-Tasmanian Alliance — An Australian Government Initiative

Victoria State Government